# ທະນາຄານແຫ່ງ ສປປ ລາວ

# ຈັດຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບການກໍານົດຕໍາແໜ່ງງານ






ໃນວັນທີ 22 ພະຈິກ ນີ້ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີພິທີເປີດຊຸດຝຶກອົບຮົມຄວາມຮູ້ພື້ນຖານກ່ຽວກັບການກຳນົດຕຳແໜ່ງງານ ໂດຍໃຫ້ກຽດເປັນປະທານຂອງທ່ານ ຄຳວົງ ທົບພະວົງ ຄະນະປະຈຳພັກ-ຮອງຜູ້ວ່າການ ທຫລ, ຫົວໜ້າກົມຈັດຕັ້ງ-ພະນັກງານທຫລ, ພ້ອມນີ້ກໍມີນັກບັນຍາຍ ແລະ ພະນັກງານຈາກບັນດາກົມ ແລະ ບັນດາສາຂາ ທຫລ ເຂົ້າຮ່ວມ 50 ກວ່າຄົນ.

ການຝຶກອົບຮົມຄັ້ງນີ້ ທ່ານ ສີງທະວອນ ດາລາວົງ ຫົວໜ້າສູນອົບຮົມລັດຖະກອນກະຊວງພາຍໃນໄດ້ຍົກໃຫ້ເຫັນບົດແນະນຳຂອງສຳນັກງານນາຍົກລັດຖະມົນຕີກ່ຽວກັບການກຳນົດຕຳແໜ່ງງານ ສະບັບເລກທີ 0472/ສນຍ ລົງວັນທີ 10 ກັນຍາ 2003 ແລະ ຄວາມຮູ້ພື້ນຖານກ່ຽວກັບການວິເຄາະງານ ແລະ ການກຳນົດຕຳແໜ່ງງານໃຫ້ນັກຝຶກອົບຮົມໄດ້ຮັບຮູ້ ເຊິ່ງຈຸດປະສົງຂອງການກຳນົດຕຳແໜ່ງງານ ກໍເພື່ອເປັນບ່ອນອີງໃນການຄຸ້ມຄອງລັດຖະກອນ, ຍົກສູງບົດບາດ-ໜ້າທີ່ຮັບຜິດຊອບ ແລະ ຫົວຄິດປະດິດສ້າງຂອງລັດຖະກອນ, ໃຊ້ຄົນໃຫ້ຖືກຕ້ອງກັບວຽກງານ-ຫຼີກເວັ້ນຄົນເຫຼືອບໍ່ພໍ ແລະບໍ່ ກ້າວກ່າຍວຽກງານກັນ, ເຮັດໃຫ້ຜູ້ທີ່ມີຄວາມຮູ້ຄວາມສາມາດເຂົ້າມາປະຕິບັດໜ້າທີ່ຢູ່ໃນການຈັດຕັ້ງ,ແກ້ໄຂປະກົດການຫຍໍ້ທໍ້ໃນວຽກງານຄຸ້ມຄອງລັດຖະກອນ ແລະ ຮັບປະກັນຄວາມໂປ່ງໃສການຈັດຕັ້ງ, ເປັນບ່ອນອີງໃນການອະນຸມັດຕົວເລກລັດຖະກອນໃໝ່ໃນແຕ່ລະປີ.

ການບໍລິຫານໄປສູ່ຈຸດປະສົງເປົ້າໝາຍນັ້ນແມ່ນຄວາມຕ້ອງການຂອງຜູ້ບໍລິຫານລະດັບຕ່າງໆ, ສະນັ້ນໜ້າທີ່ສຳຄັນແມ່ນການເຮັດໜ້າທີ່ບໍລິຫານບຸກຄະລາກອນໃຫ້ມີຄວາມເໝາະສົມໂດຍອີງໃສ່ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ, ມາດຖານ ແລະ ຄຸນສົມບັດດ້ານຕ່າງໆເປັນເກນກຳນົດ, ການກຳນົດຕຳແໜ່ງງານ ປຽບສະເໝືອນປ້າຍບອກທາງໃນການປະຕິບັດໜ້າທີ່ຂອງບຸກຄະລາກອນໃນແຕ່ລະຕຳແໜ່ງງານ ເຊິ່ງຈະຊ່ວຍໃຫ້ຮູ້ເຖິງໜ້າທີ່ຄວາມຮັບຜິດຊອບຂອງຕົນ ທັງຍັງຊ່ວຍກຳນົດແນວທາງໃນການພັດທະນາ ແລະ ປັບປຸງວຽກງານ. ການຝຶກອົບຮົມໃນຄັ້ງນີ້ດຳເນີນໄປເປັນເວລາສອງວັນ.